Savan PAD ຈົດໝາຍແຈ້ງຂ່າວ

15 ມິຖຸນາ, 2021

19

# ຫ້ອງການກະສິກຳ & ປ່າໄມ້ເມືອງ (1)

ໃນສະບັບນີ້, ພວກເຮົາເນັ້ນໜັກກ່ຽວກັບ ຫ້ອງການກະສຳກຳ ແລະ ປ່າໄມ້ເມືອງ (ກປມ) ທີ່ມີຄວາມໝຸ່ງໝັ້ນໃນການໃຫ້ຄຳປຶກສາ ແລະ ແນະນຳເຕັກນິກໃຫ້ແກ່ຊາວກະສິກອນໃນລະດັບເມືອງ.

ອີງຕາມຂໍ້ມູນໃນເດືອນພຶດສະພາປີ 2021, ໂຄງການ SavanPAD ໄດ້ຂະຫຍາຍພື້ນທີ່ຂອງໂຄງການອອກໄປເປັນ 12 ໂຄງການເປົ້າໝາຍພາຍໃນ 8 ເມືອງ 1 ນະຄອນ ໃນແຂວງສະຫວັນນະເຂດ. ໃນນັ້ນ, 2 ເມືອງ, ກໍ່ຄືເມືອງໄຊບູລີ ແລະ ຈຳພອນ ແມ່ນເປັນເມືອງທຳອິດທີ່ຖືກເລືອກໃນຕອນເລີ່ມຕົ້ນໂຄງການ.

## ກປມ ໄຊບູລີ

ໂຄງການເປົ້າມາຍ: ຕົ້ນແຫນ,ສົມສະອາດ



ທ່ານ ບຸນຍູ້
ຫົວໜ້າຫ້ອງການ
ກປມ ໄຊບູລີ

ໄຊບູລີເປັນເມືອງອູ່ເຂົ້າອູ່ປາ ດິນດຳນ້ຳຊຸ່ມ, ມີຈຸດແຂງຄືພື້ນຖານກະສິກຳ ໂດຍສະເພາະໃນພື້ນທີ່ຂອງໂຄງການ ແມ່ນມີຄວາມເຂັ້ມແຂງທາງດ້ານເຕັກນິກການປູກເຂົ້າໃຫ້ໄດ້ຮັບຜົນຜະລິດສູງ. ດ້ານລະບົບຊົນລະປະທານກໍ່ສາມາດບຳລຸງຮັກສາ ແລະ ສ້ອມແປງຄອງເໝືອງໄດ້ດ້ວຍໂຕເອງ ແລະ ສິ່ງສຳຄັນກໍ່ຄືການຮ່ວມມື ແລະ ເຂົ້າໃຈກັນເປັນຢ່າງດີລະຫວ່າງ ຫ້ອງການກະຊິກຳເມືອງ, ພະນັກງານກະສິກຳເມືອງ, ຄະນະກຸ່ມ ແລະ ຊາວນາເຮົາເປັນອັນດຽວກັນ, ແນ່ນອນວ່າພວກເຮົາຈະສາມາດສືບຕໍ່ມູນເຊື້ອນີ້ ພ້ອມທັງສາມາດພັນຂະຫຍາຍໄປສູ່ເຂດອື່ນໆ.




### ດ້ານເຕັກນິກກະສິກຳ (ການປູກເຂົ້າ)

- ໄດ້ປະຕິບັດນະໂຍບາຍກູ້ຢືມເມັດພັນ ແລະ ປຸ໋ຍ ເປັນຈຳນວນ 5 ຄັ້ງ. ມີ 318 (37%) ຈາກ 854 ຄົວເຮືອນໃນພື້ນທີ່ເປົ້າໝາຍທີ່ໄດ້ຮຽນຮູ້ເຕັກນິກການປູກເຂົ້າຜ່ານນະໂຍບາຍດັ່ງກ່າວ. ປະຈຸບັນມີການເຂົ້າຮ່ວມຝຶກອົບຮົມທັງໝົດແມ່ນ 1,212 ເທື່ອຄົນ.
- ການເກັບເງິນແມ່ນສະດວກສະບາຍດີ, ສາມາດເກັບເງິນກູ້ຢືມຄືນໄດ້ເກືອບ 100% ພາຍໃຕ້ການຮ່ວມມືຢ່າງໃກ້ຊິດກັບຜູ້ນຳຂອງຊາວກະສິກອນ.

### ດ້ານຊົນລະປະທານ / ສ້າງຄວາມເຂັ້ມແຂງກຸ່ມນຳໃຊ້ນ້ຳ

- ໄດ້ປະກອບສ່ວນໃນການຂະຫຍາຍເນື້ອທີ່ຜະລິດລະດູແລ້ງ ໃນ 2 ໂຄງການເປົ້າໝາຍ.

ຕົ້ນແຫນ : 336ຮຕ → 483 ຮຕ (+44%)
ສົມສະອາດ : 75ຮຕ → 262 ຮຕ (+249%)
(ສົມທຽບລະຫວ່າງນາແຊງປີ 2016 & 2019 )

- ກຸ່ມຜູ້ນຳໃຊ້ນ້ຳ (WUGs) ແລະຊາວນາມີຄວາມຕື່ນຕົວໃນການເກັບຄ່ານ້ຳ. ປະຈຸບັນ,ອັດຕາການເກັບຄ່ານ້ຳໃນ 2 ໂຄງການແມ່ນສຳເລັດເກືອບ 100% ແລ້ວ.



### ດ້ານການຕະຫຼາດ / ການປູກພືດສວນ

- ປະຈຸບັນ ກຳ ລັງທົດລອງການຜະລິດແນວພັນຜັກ.
- ເນື່ອງຈາກການຜະລິດໝາກເຜັດເປັນທີ່ນິຍົມໃນຂົງເຂດນີ້, ການພະຍາຍາມຜະລິດເມັດພັນເອງຈຶ່ງຢູ່ພາຍໃຕ້ການພິຈາລະນາ.

### ໂດຍລວມ

ນີ້ແມ່ນສາຍພົວພັນທີ່ແໜ້ນແກ່ນລະຫວ່າງພະນັກງານເມືອງ ແລະ ຊານາ/ກຸ່ມນຳໃຊ້ນ້ຳທັງ 2 ບ່ອນເປົ້າໝາຍ ເພາະວ່າພະນັກງານເມືອງລົງໄປຢ້ຽມຢາມເລື້ອຍໆ. ກປມ ນີ້ຖືວ່າເປັນແບບຢ່າງທີ່ດີເພາະວ່າເຂົາສາມາດບໍລິຫານການຮັບຊ່ວງຕໍ່, ວຽກທີ່ມອບໝາຍໃຫ້ ແລະ ການຖ່າຍທອດຂໍ້ມູນຂ່າວສານພາຍໃນທີມງານໄດ້ດີ.

# ກປມ ຈຳພອນ

ໂຄງການເປົ້າມາຍ: ແກ້ງກອກເໜືອ, ໂພນທອງ-ດອນແຍງ




ເມືອງຈຳພອນຖືວ່າເປັນເມືອງທີ່ໄດ້ຮັບຜົນຜະລິດດ້ານກະສິກຳສູງຮອງຈາກເມືອງໄຊບູລີ ແຕ່ໄດ້ຮັບຄວາມເສຍຫາຍຈາກຜົນກະທົບໄພນ້ຳຖ້ວມເລື້ອຍໆ. ທາງດ້ານເຕັກນິກຂອງພວກເຮົາກໍ່ເຂັ້ມແຂງເຊັ່ນກັນ. ພວກເຮົາມຸ່ງເນັ້ນໃນການສ້າງບຸກຄະລາກອນລຸ້ນໃໝ່ໆ ແລະ ມີການແລກປ່ຽນບົດຮຽນກັນໃນບັນດາພະນັກງານວິຊາການຂອງພວກເຮົາ, ສະນັ້ນ ຄວາມຮູ້ຄວາມສາມາດທີ່ພະນັກງານເຮົາຖອດຖອນໄດ້ຈາກໂຄງການແມ່ນຈະຄົງຢູ່ ແລະ ຈະສືບຕໍ່ພັດນາໃຫ້ເຂັ້ມແຂງຂຶ້ນເລື້ອຍໆ.



ທ່ານ ສຸກສະໝອນ
ຫົວໜ້າຫ້ອງການ
ກປມ ຈຳພອນ

## ໂດຍລວມ

ເນື່ອງຈາກວ່າກຸ່ມເປົ້າໝາຍໃນເມືອງຈຳພອນແມ່ນຖືກກະທົບຈາກນ້ຳຖ້ວມເລື້ອຍໆ, ການປູກຝັງໃນລະດູແລ້ງແມ່ນມີຄວາມສຳຄຳ.

ດັ່ງນັ້ນ, ການຮ່ວມມືກັນກັບກຸ່ມຜູ້ນຳໃຊ້ນ້ຳຈິ່ງສຳຄັນຫຼາຍ.




## ດ້ານເຕັກນິກກະສິກຳ (ການປູກເຂົ້າ)

- ພະນັກງານນຸ່ມນ້ອຍບັງສືບຕໍ່ຮຽນຮູ້ຈາກຊ່ຽວຊານ, ພະນັກງານແຂວງແລະຊາວນາຜູ້ຫ້າວຫັນ. ດຽວນີ້ເຂົາເຈົ້າໄດ້ກາຍເປັນຈຸດໃຈກາງໃນການດຳເນີນການຝຶກອົບຮົມໃຫ້ຊາວນາ, ການເກັບກຳຂໍ້ມູນພາກສະໜາມແລະການສຳຫຼວດຜົນຜະລິດ.
- ໄດ້ດຳເນີນນະໂຍບາຍການກູ້ຢືມແນວພັນເຂົ້າແລະປຸ໋ຍ 5 ຄັ້ງ. 134 ຄົວເຮືອນໃນຈຳນວນ 185 (74%) ໃນກຸ່ມເປົ້າໝາຍທີ່ໄດ້ຮຽນເຕັກນິກການປູກເຂົ້າຜ່ານນະໂຍບາຍນີ້.
- ເງິນກູ້ຢືມເກືອບ 100% ໄດ້ເກັບມາຈາກຊາວນາຢ່າງສະດວກສະບາຍຍົກເວັ້ນປີທີ່ຖືກຜົນກະທົບຈາກໄພນ້ຳຖ້ວມຢ່າງຮຸນແຮງ.
- ຜົນຜະລິດໃນກຸ່ມເປົ້າໝາຍ 2 ບ່ອນໄດ້ເພີ່ມຂຶ້ນ 15%. (ອີງຕາມການສຳລວດຜົນຜະລິດລະດູແລ້ງ).

## ດ້ານຊົນລະປະທານ / ສ້າງຄວາມເຂັ້ມແຂງກຸ່ມນຳໃຊ້ນ້ຳ

- ມີການຈັດກອງປະຊຸມຂອງກຸ່ມນຳໃຊ້ນ້ຳຢ່າງເປັນປົກກະຕິ ສະນັ້ນທັກສະໃນການຄຸ້ມຄອງຈັດການນ້ຳຂອງທັງ 2 ກຸ່ມຈຶ່ງໄດ້ຮັບການປັບປຸງເປັນຢ່າງດີ.
- ເນື່ອງຈາກວ່າ ກປມ ແລະ ກຸ່ມນຳໃຊ້ນ້ຳເນັ້ນໜັກຕໍ່ການແຈກຢາຍນ້ຳຢ່າງມີປະສິດທິຜົນ, ສະນັ້ນຈຶ່ງພະຍາຍາມໝູນໃຊ້ກອງທຶນຈາກພາກສ່ວນເອກະຊົນໃນການຟື້ນຟູລະບົບຄອງເໝືອງ.

## *ຊ່ຽວຊານຄົນໃຫມ່ ທ່ານນາງ ກິກຸຈິ* (PAPC ການສະ ໜັບ ສະ ໜູນ ດ້ານການຄຸ້ມຄອງ)



ນາງ ກິກຸຈິ (ຜູ້ຢູ່ວ່າງກາງ)
ປະຊຸມກັບຄູ່ຮ່ວມງານ

ເພື່ອສືບຕໍ່ຈັດຕັ້ງປະຕິບັດກິດຈະກຳໂດຍຂັ້ນແຂວງ, ພາຍຫຼັງສິ້ນສຸດໂຄງການ Savan PAD, ຄະນະສົ່ງເສີມກະສິກຳແບບມີສ່ວນຮ່ວມ (PAPC)" ໄດ້ຖືກສ້າງຕັ້ງຂຶ້ນໃນປີກາຍນີ້ເຊິ່ງປະກອບດ້ວຍຫຼາຍພາກສ່ວນທີ່ກ່ຽວຂ້ອງພະແນກກະສິກຳແລະປ່າໄມ້ແຂວງ.

ຕໍ່ໄປນີ້, ພວກເຮົາຈະປຶກສາຫາລືການວິທີການດຳເນີນງານຂອງແຂວງກ່ຽວກັບການຈັດຕັ້ງປະຕິບັດຄະນະ PAPC ແລະກຸ່ມປະຕິບັດກິດຈະກຳຂອງຄະນະດັ່ງກ່າວ, ແລະຫຼັງຈາກນັ້ນກຳນົດແຜນກິດຈະກຳໄລຍະກາງ ແລະ ໄລຍະຍາວຂອງ PAPC. ຜ່ານການປະຕິບັດດັ່ງກ່າວ, ຂ້າພະເຈົ້າຫວັງວ່າສະມາຊິກທຸກຄົນຈະເຂົ້າໃຈເລິກເຊິ່ງກ່ຍວກັບຄວາມສຳຄັນຂອງຄະນະສົ່ງເສີມນີ້ພ້ອມທັງພາລະບົດບາດຂອງພວກເຂົາໃນການສະໜັບສະໜູນການຄຸ້ມຄອງ PAPC.

ຈົດໝາຍແຈ້ງຂ່າວຂອງໂຄງການ ສະຫວັນເພັດ
ໂຄງການພັດທະນາ ກະສິກຳ ແບບມີສ່ວນຮ່ວມ ແຂວງສະຫວັນນະເຂດ (ສະຫວັນເພັດ)
ຕູ້ ປ.ນ. 16, ຂະແໜງຊົນລະປະທານ, ພະແນກ ກະສິກຳ ແລະ ປ່າໄມ້ ແຂວງສະຫວັນນະເຂດ, (ໂທ : 041-252497)